# ຕົວຢ່າງ ໜ້ານີ້ໃຊ້ສຳລັບອ້າງອີງເທົ່ານັ້ນ

Employment Development Department
State of California

**ວັນທີສົ່ງຈົດໝາຍ: 00/00/00**
**000 0000**
**ວັນທີເລີ່ມຕົ້ນຂອງປີຜົນປະໂຫຍດ: 00/00/00**
**ສຳລັບຫ້ອງການນຳໃຊ້ເທົ່ານັ້ນ: 00000**

## ໜັງສືແຈ້ງການກ່ຽວກັບການແຈ້ງຂໍ້ຄວາມເທັດທີ່ອາດຈະເປັນໄປໄດ້

**ຍ້ອນຫຍັງຂ້າພະເຈົ້າຈຶ່ງໄດ້ຮັບໜັງສືແຈ້ງການສະບັບນີ້?**

ທ່ານໄດ້ຮັບໜັງສືແຈ້ງການສະບັບນີ້ເພາະວ່າຂໍ້ມູນທີ່ທາງພະແນກ EDD ມີລະບຸວ່າທ່ານອາດຈະໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໃຫ້ຂໍ້ມູນທີ່ບໍ່ຄົບຖ້ວນກັບທາງ EDD ເຊິ່ງເປັນຂໍ້ມູນກ່ຽວກັບບັນຫາດ້ານສິດໃນການໄດ້ຮັບຄວາມຊ່ວຍເຫຼືອທີ່ອາດຈະເປັນໄປໄດ້ດັ່ງທີ່ລະບຸໄວ້ໃນ *ໜັງສືແຈ້ງການກ່ຽວກັບການຈ່າຍເງິນເກີນທີ່ອາດຈະເປັນໄປໄດ້ (Notice of Potential Overpayment)* ທີ່ຄັດຕິດມາພ້ອມນີ້.

**ຖ້າທາງ EDD ຕັດສິນວ່າຂ້າພະເຈົ້າແຈ້ງຂໍ້ຄວາມເທັດ ບົດລົງໂທດແມ່ນຫຍັງ?**

ຖ້າທາງ EDD ພົບວ່າທ່ານເຈດຕະນາແລະຮູ້ວ່າໄດ້ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໃຫ້ຂໍ້ມູນບໍ່ຄົບຖ້ວນເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອ
ທ່ານຈະໄດ້ຮັບການລົງໂທດຖານໃຫ້ "ຂໍ້ມູນທີ່ເປັນເທັດ" 2 ເຖິງ 23 ອາທິດ.
ອາທິດທີ່ເປັນການລົງໂທດເຫຼົ່ານີ້ຈະຖືກເພີ່ມເຕີມໃສ່ໃນການຮຽກຮ້ອງຂໍເງິນຊ່ວຍເຫຼືອການຫວ່າງງານຂອງທ່ານໃນປັດຈຸບັນແລະໃນອະນາຄົດ.
ໃນແຕ່ລະອາທິດທີ່ມີການລົງໂທດ ທ່ານຕ້ອງຫວ່າງງານເຕັມເວລາ ຫຼື ບໍ່ເຕັມເວລາ, ສົ່ງໃບຢັ້ງຢືນ ແລະມີຄຸນສົມບັດຄົບຕາມຂໍ້ກຳນົດທຸກຂໍ້
ແຕ່ທ່ານຈະບໍ່ໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານສຳລັບອາທິດເຫຼົ່ານັ້ນ.
ນອກຈາກນັ້ນທ່ານຍັງອາດຈະຕ້ອງຈ່າຍຄືນເງິນຊ່ວຍເຫຼືອທີ່ໄດ້ຮັບກ່ອນໜ້ານັ້ນ ແລະຈ່າຍຄ່າປັບໃໝເປັນເງິນເທົ່າກັບ 30%
ຂອງຈຳນວນເງິນເກີນທັງໝົດທີ່ທ່ານໄດ້ຮັບ.

**ຂ້າພະເຈົ້າຈະສາມາດໃຫ້ຂໍ້ມູນກັບທາງ EDD ກ່ຽວກັບການແຈ້ງຂໍ້ຄວາມເທັດທີ່ອາດຈະເປັນໄປໄດ້ແນວໃດ?**

ຖ້າທ່ານຕ້ອງການໃຫ້ຂໍ້ມູນກ່ຽວກັບການແຈ້ງຂໍ້ຄວາມເທັດຂອງທ່ານທີ່ອາດຈະເປັນໄປໄດ້ ທ່ານສາມາດຕອບຄຳຖາມຂ້າງລຸ່ມ,
ລົງຊື່ແລະວັນທີໃນໜັງສືແຈ້ງການສະບັບນີ້ ແລະສົ່ງຄືນທາງໄປສະນີໄປຫາທີ່ຢູ່ຂ້າງລຸ່ມນີ້**ພາຍໃນ 10 ມື້**
ນັບຈາກວັນທີໃນ *ໜັງສືແຈ້ງການກ່ຽວກັບການຈ່າຍເງິນເກີນທີ່ອາດຈະເປັນໄປໄດ້.* ຄຳຕອບທີ່ທ່ານສະໜອງໃຫ້ຈະຊ່ວຍໃຫ້ EDD ຕັດສິນວ່າທ່ານຮູ້ ຫຼື
ຄວນຈະໄດ້ຮູ້ວ່າຂໍ້ມູນທີ່ທ່ານໄດ້ໃຫ້ໄວ້ກັບ EDD ນັ້ນບໍ່ຖືກຕ້ອງຫຼືບໍ່ ຫຼື
ທ່ານບໍ່ໄດ້ໃຫ້ຂໍ້ມູນທີ່ຄົບຖ້ວນໂດຍເຈດຕະນາເພື່ອໃຫ້ໄດ້ຮັບເງິນຊ່ວຍເຫຼືອການຫວ່າງງານຫຼືບໍ່.

**ຖ້າທ່ານຕ້ອງການຕອບເປັນລາຍລັກອັກສອນ ກະລຸນາຕອບຄຳຖາມຕໍ່ໄປນີ້ໃຫ້ຄົບຖ້ວນທີ່ສຸດເທົ່າທີ່ຈະເປັນໄປໄດ້:**

1. ທ່ານໄດ້ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໄດ້ໃຫ້ຂໍ້ມູນທີ່ບໍ່ຄົບຖ້ວນກັບທາງ EDD ບໍ? ☐ ແມ່ນ ☐ ບໍ່ແມ່ນ
2. ຖ້າທ່ານໄດ້ໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ທ່ານຮູ້ບໍວ່າຂໍ້ມູນທີ່ທ່ານໃຫ້ນັ້ນບໍ່ຖືກຕ້ອງໃນເວລາທີ່ທ່ານໃຫ້ຂໍ້ມູນນັ້ນ? ☐ ແມ່ນ ☐ ບໍ່ແມ່ນ
3. ຖ້າທ່ານໄດ້ໃຫ້ຂໍ້ມູນທີ່ບໍ່ຄົບຖ້ວນ ທ່ານຮູ້ບໍວ່າທ່ານຄວນຈະໃຫ້ຂໍ້ມູນນັ້ນກັບ EDD ໃນເວລາທີ່ທ່ານໃຫ້ຂໍ້ມູນນັ້ນ? ☐ ແມ່ນ ☐ ບໍ່ແມ່ນ
4. ຖ້າທ່ານພົບວ່າຂໍ້ມູນທີ່ທ່ານໃຫ້ໄວ້ແມ່ນບໍ່ຖືກຕ້ອງ ທ່ານໄດ້ພະຍາຍາມທີ່ຈະແຈ້ງໃຫ້ທາງ EDD ຮູ້ບໍ? ☐ ແມ່ນ ☐ ບໍ່ແມ່ນ
5. ຖ້າທ່ານຕອບວ່າແມ່ນໃນຄຳຖາມຂໍ້ 1 ຍ້ອນຫຍັງທ່ານຈຶ່ງໃຫ້ຂໍ້ມູນທີ່ບໍ່ຖືກຕ້ອງ ຫຼື ໃຫ້ຂໍ້ມູນທີ່ບໍ່ຄົບຖ້ວນນັ້ນ?

   ______________________________________________________________________

6. ທ່ານມີຂໍ້ມູນອື່ນໃດເພີ່ມເຕີມບໍ?

   ______________________________________________________________________

**ຂ້າພະເຈົ້າເຂົ້າໃຈວ່າກົດໝາຍຂອງລັດກຳນົດໃຫ້ມີບົດລົງໂທດດ້ານການເງິນ
ແລະຕັດສິດໃນການໄດ້ຮັບຄວາມຊ່ວຍເຫຼືອເປັນອາທິດຖ້າຂ້າພະເຈົ້າແຈ້ງຂໍ້ຄວາມເທັດໂດຍເຈດຕະນາ ຫຼື
ແຈ້ງຂໍ້ມູນຂໍ້ເທັດຈິງທີ່ບໍ່ຄົບຖ້ວນເພື່ອໃຫ້ໄດ້ຮັບຄວາມຊ່ວຍເຫຼືອ.**

**ຂ້າພະເຈົ້າຂໍຢັ້ງຢືນພາຍໃຕ້ບົດລົງໂທດຂອງການໃຫ້ການເທັດວ່າ ຂໍ້ເທັດຈິງທີ່ຂ້າພະເຈົ້າໃຫ້ໄວ້ນີ້ແມ່ນເປັນຄວາມຈິງແລະຖືກຕ້ອງ.**

| ______________________ | ______________________ | ______________________ |
|---|---|---|
| **ລາຍເຊັນ** | **ຂຽນຊື່ເປັນຕົວບັນລົງ** | **ວັນທີ** |

**ສົ່ງແບບຟອມທີ່ປະກອບສຳເລັດໄປທີ່:**

EDD
ທີ່ຢູ່
ເມືອງ, ລັດ, ລະຫັດໄປສະນີ